Seattle Public Utilities

# ຫຼອດດູດ ແລະເຄື່ອງໃຊ້ໃນຄົວ

ລາວ Laotian

ຮຽນທ່ານລູກຄ້າ,

ຈົດໝາຍສະບັບນີ້ແມ່ນເພື່ອແຈ້ງໃຫ້ບັນດາທຸລະກິດບໍລິການດ້ານອາຫານຮູ້ວ່າ ການໃຊ້ເຄື່ອງໃຊ້ໃນຄົວທີ່ເປັນປລາສຕິກ, ຫຼອດດູດປລາສຕິກ, ແລະໄມ້ຈິ້ມອາຫານທີ່ເປັນປລາສຕິກ ຈະຖືກຫ້າມໃຊ້ໃນຊີແອທເທິລ ໂດຍມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ກໍຣະກະດາ 2018 ເປັນຕົ້ນໄປ. ເຄື່ອງໃຊ້ສອຍທີ່ຍອມໃຫ້ໃຊ້ໄດ້ ລວມເຖິງ ເຄື່ອງໃຊ້ສອຍໃນຄົວ, ຫຼອດດູດ, ແລະໄມ້ຈິ້ມອາຫານປະເພດທີ່ທົນທານ ຫຼື ສາມາດຍ່ອຍສະຫຼາຍໄດ້. ຫຼອດດູດທີ່ຍອມໃຫ້ໃຊ້ໄດ້ ລວມເຖິງ ບັນດາຫຼອດດູດທີ່ເຮັດຈາກເຈັ້ຽຫຼື ປລາສຕິກທີ່ສາມາດຍ່ອຍສະຫຼາຍໄດ້. ເຄື່ອງໃຊ້ສອຍທີ່ຖືກຫ້າມ ລວມເຖິງ ສ້ອມປລາສຕິກ, ບ່ວງປລາສຕິກ, ມີດປລາສຕິກ, ແລະໄມ້ຈິ້ມອາຫານປລາສຕິກ.

**ຂອບເວລາ:** ໃນປີ 2008, ເມືອງຊີແອທເທິລໄດ້ນໍາກົດໝາຍມາໃຊ້ຊຶ່ງກໍານົດວ່າ ເຄື່ອງໃຊ້ບໍລິການດ້ານອາຫານປະເພດໃຊ້ຄັ້ງດຽວ, ລວມເຖິງ ການຫໍ່ບັນຈຸ ແລະເຄື່ອງໃຊ້ສອຍໃນຄົວ, ຕ້ອງສາມາດນໍາກັບຄືນມາໃຊ້ໃໝ່ໄດ້ ຫຼື ຍ່ອຍສະຫຼາຍໄດ້. ພະແນກສາທາລະນູປະໂພກສາທາລະນະເມືອງຊີແອທເທິລ ( Seattle Public Utilities) ໄດ້ໃຫ້ຂໍ້ຍົກເວັ້ນແບບປີຕໍ່ປີສໍາລັບເຄື່ອງໃຊ້ສອຍຈໍານວນໜຶ່ງຊຶ່ງລວມເຖິງ ເຄື່ອງໃຊ້ສອຍໃນຄົວ ແລະຫຼອດດູດທີ່ເປັນປລາສຕິກ. ເຄື່ອງໃຊ້ສອຍໃນຄົວ ແລະຫຼອດດູດທີ່ເປັນປລາສຕິກບໍ່ສາມາດນໍາກັບຄືນໄປໃຊ້ໃໝ່ໄດ້. ດຽວນີ້ ມີບັນດາໂຮງງານຜູ້ຜະລິດຈໍານວນຫຼາຍທີ່ຜະລິດເຄື່ອງໃຊ້ສອຍໃນຄົວ ແລະຫຼອດດູດປະເພດທີ່ໄດ້ຮັບອະນຸມັດ, ເຄື່ອງໃຊ້ສອຍສໍາລັບບໍລິການອາຫານເຫຼົ່ານີ້ຈະບໍ່ໄດ້ຮັບການຍົກເວັ້ນອີກຕໍ່ໄປຈາກຂໍ້ກໍານົດທີ່ມີຢູ່ໃນປັດຈຸບັນ.

**ການບັງຄັບໃຊ້:** ພະນັກງານຂອງ SPU ສືບຕໍ່ປະຕິບັດວຽກກວດສອບທຸລະກິດດ້ານການບໍລິການອາຫານທັງໝົດເພື່ອພິສູດຢັ້ງຢືນວ່າເຂົາເຈົ້າປະຕິບັດຕາມປະມວນກົດຂໍ້ບັງຄັບຂອງເທສະບານເມືອງຊີແອທເທິລ ມາດຕາ 21.36.084 ແລະ 21.36.086 ຊຶ່ງກໍານົດວ່າ:

- ບັນດາທຸລະກິດດ້ານການບໍລິການອາຫານຈໍາຕ້ອງນໍາໃຊ້ພາຊະນະບັນຈຸອາຫານທີ່ສາມາດຍ່ອຍສະຫຼາຍໄດ້ ຫຼື ນໍາກັບຄືນໄປໃຊ້ໄດ້ອີກ (ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 7/1/2010).
- ການນໍາໃຊ້ຖັງເກັບຂີ້ເຫຍື້ອ ແລະບໍລິການເກັບຂີ້ເຫຍື້ອເພື່ອການຍ່ອຍສະຫຼາຍ ແລະ ນໍາກັບຄືນໄປໃຊ້ໃໝ່ ແມ່ນຈໍາເປັນ (ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 7/1/2010).
- ຫ້າມການໃຊ້ໂຟມໂພລີສະໄຕຣີນໃນການຫໍ່ອາຫານ (ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1/1/2009).
- ຫ້າມການນໍາໃຊ້ເຄື່ອງໃຊ້ສອຍໃນຄົວທີ່ເປັນປລາສຕິກ ແລະຫຼອດດູດປລາສຕິກສໍາລັບອາຫານ (ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 7/1/2018).
- ການບົກຜ່ອງບໍ່ປະຕິບັດຕາມກົດຂໍ້ບັງຄັບດ້ານພາຊະນະໃສ່ອາຫານອາດສົ່ງຜົນໃຫ້ຖືກປັບ $250.

## ການຈັດຕັ້ງປະຕິບັດ:

- ✔ ນໍາໃຊ້ເຄື່ອງໃຊ້ສອຍໃນຄົວ ແລະຫຼອດດູດທີ່ມີຢູ່ໃນປັດຈຸບັນໃຫ້ໝົດກ່ອນວັນທີ 1 ກໍຣະກະດາ 2018. ຖ້າວ່າທ່ານບໍ່ສາມາດເຮັດແນວນັ້ນໄດ້, ກະຣຸນາຕິດຕໍ່ພວກເຮົາທີ່ເບີໂທຣລຸ່ມນີ້ເພື່ອຈັດຕັ້ງຕາຕະລາງການປະຕິບັດຕາມ.
- ✔ ເລືອກໃຊ້ພາຊະນະໃສ່ອາຫານທີ່ອະນຸຍາດໃຫ້ເພື່ອໃຫ້ເປັນໄປຕາມຂໍ້ກໍານົດດ້ານການຫໍ່ບັນຈຸ, ເຄື່ອງໃຊ້ສອຍໃນຄົວ, ແລະຫຼອດດູດ.
- ✔ ຈັດຫາເຄື່ອງໃຊ້ສອຍ ແລະຫຼອດດູດສະເພາະເມື່ອຮ້ອງຂໍ, ແລະນໍາໃຊ້ເຄື່ອງຈ່າຍເພື່ອໃຫ້ລູກຄ້າສາມາດເລືອກເຄື່ອງໃຊ້ສອຍ ແລະຫຼອດດູດຂອງຕົນເອງ, ຖ້າວ່າ ແນວທາງປະຕິບັດໃນປັດຈຸບັນນີ້ຍັງບໍ່ພ້ອມນໍາໃຊ້.
- ✔ ກໍານົດບ່ອນວາງຖັງເກັບຂີ້ເຫຍື້ອໃຫ້ຊັດເຈນ ພ້ອມກັບໝາຍໄວ້ວ່າສໍາລັບນໍາກັບຄືນໄປໃຊ້ໃໝ່ ແລະຍ່ອຍສະຫຼາຍໄດ້
- ✔ ຈັດການສໍາລັບບໍລິການເກັບຂີ້ເຫຍື້ອໃນທາງການຄ້າ ສໍາລັບຂີ້ເຫຍື້ອປະເພດຍ່ອນສະຫຼາຍໄດ້ ແລະນໍາກັບຄືນໄປໃຊ້ໃໝ່.

## ການຊ່ວຍເຫຼືອໂດຍບໍ່ເສັຽຄ່າ:

ຕິດຕໍ່ SPU ຜ່ານ GreenBusiness@Seattle.Gov ຫຼື 206-343-8505 ຫຼືເບິ່ງທີ່ເວັບໄຊ SPU ທີ່ seattle.gov/util/GreenYourBusiness ສໍາລັບຂໍ້ມູນເພີ່ມເຕີມ. ທີ່ເວັບໄຊ, ທ່ານສາມາດສັ່ງເອົາເອກະສານທີ່ຫຼາກຫຼາຍໂດຍບໍ່ເສັຽຄ່າ, ລວມເຖິງ ໃບປິວ ແລະສະຕິກເກີ, ເພື່ອຊ່ວຍທ່ານໃນການສື່ສານແຈ້ງຕໍ່ພະນັກງານ ແລະລູກຄ້າຂອງທ່ານກ່ຽວກັບວ່າສິ່ງໃດແດ່ທີ່ຍ່ອນສະຫຼາຍໄດ້ ແລະນໍາກັບຄືນໄປໃຊ້ໃໝ່ໄດ້ ແລະສິ່ງທີ່ກໍານົດໄວ້ໃນຊີແອທເທິລ. ຂອບໃຈສໍາລັບຄວາມຮ່ວມມື ແລະຄວາມມຸ່ງໝັ້ນຂອງທ່ານໃນການຊ່ວຍເມືອງຊີແອທເທິລໃນການປະຢັດຊັບພະຍາກອນ ແລະຫຼຸດຜ່ອນຂອງເສັຽ.

ດ້ວຍຄວາມນັບຖື,

ພະແນກສາທາລະນູປະໂພກສາທາລະນະເມືອງຊີແອທເທິລ
ໂຄງການທຸລະກິດສີຂຽວ

For interpretation services please call 206-684-3000.
如需口譯服務請電 206-684-3000。
통역 서비스를 원하시면 206-684-3000 번으로 전화해 주십시오.
Wixii adeegyada turjubaanka fadlan wac 206-684-3000.
Para servicios de traducción, por favor llame al 206-684-3000.
Para sa serbisyo ng tagapagpaliwanag, tumawag sa 206-684-3000.
Muốn yêu cầu dịch vụ thông dịch xin gọi số 206-684-3000.

Seattle Public Utilities

# ຂໍ້ກຳນົດໃໝ່ເລື່ອງຫຼອດດູດ ແລະເຄື່ອງໃຊ້ໃນຄົວ

ລາວ Laotian

## ສະຫຼຸບຂໍ້ກຳນົດດ້ານພາຊະນະທີ່ໃຊ້ກັບອາຫານຂອງເມືອງຊີແອທເທິລ: (SMC 21.36.086)

! **ຫ້າມການໃຊ້ຫຼອດດູດປລາສຕິກ ແລະເຄື່ອງໃຊ້ສອຍທີ່ເປັນປລາສຕິກ ໂດຍມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ກໍຣະກະດາ 2018.** ຫ້າມບໍ່ໃຫ້ບັນດາທຸລະກິດດ້ານບໍລິການອາຫານນຳໃຊ້ຫຼອດດູດປລາສຕິກ ແລະເຄື່ອງໃຊ້ສອຍປລາສຕິກໃນເມືອງຊີແອທເທິລ. ການຍົກເວັ້ນຊົ່ວຄາວສຳລັບການໃຊ້ຫຼອດດູດປລາສຕິກ ແລະເຄື່ອງໃຊ້ສອຍປລາສຕິກຈະໝົດອາຍຸລົງ, ແລະຈະກຳນົດໃຫ້ນຳໃຊ້ຫຼອດດູດ ແລະເຄື່ອງໃຊ້ສອຍປະເພດຍ່ອຍສະຫຼາຍໄດ້ໂດຍມີຜົນບັງຄັບໃຊ້ ຕັ້ງແຕ່ວັນທີ 1 ກໍຣະກະດາ 2018.

**ໃໝ່**

| ຫ້າມ | ອະນຸຍາດ | ຫ້າມ | ອະນຸຍາດ |
|---|---|---|---|
|  |  |  |  |
| ຫຼອດດູດປລາສຕິກປະເພດໃຊ້ແລ້ວຖິ້ມ | ຫຼອດດູດທີ່ເປັນເຈັ້ຍປະເພດຍ່ອຍສະຫຼາຍໄດ້* ແລະຫຼອດດູດປລາສຕິກທີ່ຍ່ອຍສະຫຼາຍໄດ້* | ເຄື່ອງໃຊ້ສອຍປລາສຕິກປະເພດໃຊ້ແລ້ວຖິ້ມ | ເຄື່ອງໃຊ້ສອຍທີ່ຍ່ອຍສະຫຼາຍໄດ້* |

✔ ໂດຍມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ກໍຣະກະດາ 2010, ຫ້າມທຸລະກິດບໍລິການອາຫານບໍ່ໃຫ້ຂາຍ ຫຼື ຈັດຫາອາຫານເພື່ອບໍລິໂພກພາຍໃນຮ້ານ ຫຼື ນອກຮ້ານ ໂດຍໃຊ້ພາຊະນະທີ່ໃຊ້ກັບອາຫານປະເພດໃຊ້ແລ້ວຖິ້ມ. ຫໍ່ອາຫານທີ່ໃຊ້ສຳລັບກິນໃນຮ້ານຕ້ອງເປັນປະເພດຍ່ອຍສະຫຼາຍໄດ້ ແລະຫໍ່ອາຫານປະເພດທີ່ຖືອອກຈາກຮ້ານອາດເປັນປະເພດຍ່ອຍສະຫຼາຍໄດ້ ຫຼື ນຳກັບຄືນໄປໃຊ້ໃໝ່ໄດ້.

* ຍ່ອຍສະຫຼາຍໄດ້ຊຶ່ງໄດ້ຮັບອະນຸມັດ ໝາຍເຖິງ ຫໍ່ ຫຼື ພາຊະນະທີ່ໃຊ້ກັບອາຫານທີ່ຜ່ານການທົດສອບແລ້ວ ແລະໄດ້ຮັບອະນຸມັດຢູ່ທີ່ສະຖານທີ່ຍ່ອຍວັດສະດຸເພື່ອການຄ້າຂອງທ້ອງຖິ່ນ.

**ເຄື່ອງໃຊ້ສອຍໃນຄົວທີ່ເປັນປລາສຕິກ ແລະຫຼອດດູດປລາສຕິກແມ່ນຖືກຫ້າມໃນເມືອງຊີແອທເທິລ, ໂດຍມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ກໍຣະກະດາ 2018.** ພາຊະນະເຄື່ອງໃຊ້ສອຍທີ່ໃຊ້ກັບອາຫານທີ່ອະນຸຍາດໃຫ້ນຳໃຊ້ໄດ້ ລວມມີ ເຄື່ອງໃຊ້ສອຍໃນຄົວ ແລະຫຼອດດູດປະເພດທີ່ໃຊ້ກິນທານ ຫຼື ໄດ້ຮັບອະນຸມັດ.

**Los utensilios de plástico y los popotes de plástico están prohibidos en Seattle a partir del 1ero de julio de 2018.**

Los únicos utensilios y popotes desechables que están permitidos para uso comercial son aquellos que tienen la etiqueta “compostable”, los cuales están hechos de materiales que se pueden convertir en compost. Los utensilios y popotes reusables están permitidos.

Spanish
Español

**2018年7月1日開始, 西雅圖禁止使用塑料餐具和塑料吸管。**

允許使用的餐具包括認可的可堆肥餐具和吸管。

Chinese
中文

**Dụng cụ ăn (thìa, dĩa, đũa) và ống hút dùng một lần bằng nhựa sẽ bị cấm ở Seattle kể từ ngày 1 tháng 7 năm 2018.**

Các dụng cụ ăn dùng một lần được phép sử dụng bao gồm thìa, dĩa, đũa và ống hút được công nhận là có thể phân hủy được gọi là compostable.

Vietnamese
Tiếng Việt

**플라스틱 식기와 플라스틱 빨대는 2018년 7월**

서비스를 위해 사용이 허용된 식기는 오직 분해 가능한 것으로 승인된 식기와 빨대만 포함합니다.

Korean
한국어

ສຳລັບລາຍລະອຽດກ່ຽວກັບຜະລິດຕະພັນທີ່ຍ່ອຍສະຫຼາຍໄດ້ທີ່ໄດ້ຮັບອະນຸມັດ, ເບິ່ງທີ່ເວັບໄຊ:

**seattle.gov/util/GreenYourBusiness**